ແບບຟອມສະໝັກ ແລະ ກວດສອບຄວາມຖືກຕ້ອງການຂໍເອົາອາຫານຟຣີ ແລະ ອາຫານລາຄາຜ່ອນຢູ່ໂຮງຮຽນ

ສົກຮຽນປີ _____-_____

ຄຳແນະນຳສຳລັບເຂດການສຶກສາ

ຊຸດເອກະສານນີ້ປະກອບມີແບບຟອມຕົ້ນແບບ:

ຂໍ້ມູນ**ຈຳເປັນ**ທີ່*ຕ້ອງ*ໄດ້ສະໜອງໃຫ້ຄົວເຮືອນ:

- ຈົດໝາຍເຖິງຄົວເຮືອນ
- ຄຳຮ້ອງສະໝັກຂໍເອົາອາຫານຟຣີ ແລະ ລາຄາຜ່ອນຢູ່ໂຮງຮຽນ
- ແຈ້ງການເຖິງຄົວເຮືອນເລື່ອງການອະນຸມັດ/ການປະຕິເສດການຊ່ວຍເຫຼືອ[1] (ຕ້ອງໄດ້ສົ່ງແຈ້ງການຖ້າຄົວເຮືອນຖືກປະຕິເສດ)

ຂໍ້ມູນ**ຈຳເປັນ**ທີ່ຕ້ອງສະໜອງໃຫ້ສຳລັບຄົວເຮືອນທີ່ຖືກຄັດເລືອກສຳລັບການກວດພິສູດເອກະສານຂໍ້ມູນດ້ານການມີສິດໄດ້ຮັບ:

- ແຈ້ງການການຄັດເລືອກສຳລັບການກວດພິສູດຄວາມຖືກຕ້ອງຂອງການມີສິໄດ້ຮັບ
- ຈົດໝາຍແຈ້ງບອກຜົນການກວດພິສູດຄວາມຖືກຕ້ອງ

ເອກະສານກ່ຽວຂ້ອງກັບຄຳຮ້ອງສະໝັກ**ທີ່ບໍ່ບັງຄັບ** *ທີ່ອາດຈະ*ຖືກສົ່ງໃຫ້ແກ່ຄົວເຮືອນ:

- ການແລກປ່ຽນຂໍ້ມູນກັບທາງ Medicaid/SCHIP
- ການແລກປ່ຽນຂໍ້ມູນກັນໂຄງການອື່ນ
- ແຈ້ງການເຖິງຄົວເຮືອນເລື່ອງການອະນຸມັດ/ການປະຕິເສດການຊ່ວຍເຫຼືອ[1] (ແຈ້ງການແມ່ນບໍ່ບັງຄັບ (ສົ່ງຫຼືບໍ່ສົ່ງກໍ່ໄດ້) ຖ້າຄົວເຮືອນໄດ້ຮັບອະນຸມັດ)
- ແຈ້ງການການຮັບຮອງໂດຍກົງ

ໜ້າເຈ້ຍຖືກອອກແບບມາໃຫ້ພິມອອກໃນເຈ້ຍຂະໜາດ 8½" ທັບ 11". ບາງໜ້າເຈ້ຍອາດຈະຖືກພິມຢູ່ດ້ານໜ້າ ແລະ ດ້ານຫຼັງ. ທ່ານຈຳເປັນຕ້ອງລະບຸການຊ່ວຍເຫຼືອທີ່ຖືກສະໜອງໃຫ້ຢູ່ໂຮງຮຽນຂອງທ່ານ, ເຊັ່ນວ່າ ອາຫານຫວ່າງຫຼັງເລີກຮຽນ. [bold, bracketed fields] ຊີ້ບອກບ່ອນທີ່ທ່ານຕ້ອງໄດ້ຕື່ມຂໍ້ມູນສະເພາະຂອງເຂດການສຶກສາ. ຕົວຢ່າງ, ທ່ານຕ້ອງລວມເອົາເບີໂທລະສັບທີ່ບໍ່ເສຍຄ່າຂອງເຂດການສຶກສາຂອງທ່ານສຳລັບການຊ່ວຍເຫຼືອເລື່ອງການກວດພິສູດຄວາມຖືກຕ້ອງຕໍ່ກັບເອກະສານການກວດພິສູດ. ຖ້າເອກະສານເຫຼົ່ານີ້ບໍ່ໄດ້ຖືກແກ້ໄຂເພື່ອລວມເອົາຊື່ຂອງລັດທ່ານສຳລັບໂຄງການຊ່ວຍເຫຼືອດ້ານໂພຊະນະເສີມ (SNAP), ເຊິ່ງໃນເມື່ອກ່ອນເອີ້ນວ່າໂຄງການບັດອາຫານ, ການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF), ໂຄງການປະກັນສຸຂະພາບເດັກນ້ອຍຂອງລັດ (SCHIP), ຫຼື, ຖ້າສາມາດນຳໃຊ້ໄດ້, ເພື່ອເພີ່ມໂຄງການແຈກຢາຍອາຫານໃນເຂດສະຫງວນສຳລັບຊາວອິນເດຍ (FDPIR), ທ່ານຄວນໃສ່ຂໍ້ມູນເຫຼົ່ານີ້ຕາມຄວາມເໝາະສົມ. ຊຸດຄຳຮ້ອງສະໝັກຕົ້ນແບບນີ້ປະກອບມີຂໍ້ມູນກ່ຽວກັບການຍົກເວັ້ນເງິນອຸດໜູນທີ່ຢູ່ອາໃສສຳລັບຄອບຄົວເຫຼົ່ານັ້ນທີ່ຢູ່ໃນໂຄງການພິເສດສຳລັບທີ່ພັກອາໃສຂອງທະຫານ [Military Housing Privatization Initiative]. ຖ້າສິ່ງນີ້ບໍ່ກ່ຽວຂ້ອງກັບເຂດການສຶກສາຂອງທ່ານ, ກະລຸນາ ດັດແກ້ຕາມຄວາມເໝາະສົມ.
ໜ່ວຍງານໃນລັດຂອງທ່ານອາດຈະກຳນົດໃຫ້ທ່ານສົ່ງຊຸດຄຳຮ້ອງສະໝັກຂອງທ່ານເພື່ອການອະນຸມັດ. ຖ້າທ່ານມີຄຳຖາມ, ໃຫ້ຕິດຕໍ່ຫາ:

[State agency address]

[1]ທຸກຄົວເຮືອນຕ້ອງໄດ້ຮັບແຈ້ງໃຫ້ຮູ້ສະຖານະການມີສິດຂອງເຂົາເຈົ້າ. ຄົວເຮືອນທີ່ມີເດັກນ້ອຍທີ່ຖືກປະຕິເສດການຊ່ວຍເຫຼືອຕ້ອງໄດ້ຮັບແຈ້ງການບອກການປະຕິເສດເປັນລາຍລັກອັກສອນ. ແຈ້ງການນັ້ນຕ້ອງໄດ້ບອກຄົວເຮືອນກ່ຽວກັບເຫດຜົນສຳລັບການປະຕິເສດການຊ່ວຍເຫຼືອ, ສິດທິໃນການອຸທອນ, ຄຳແນະນຳກ່ຽວກັບວິທີຮ້ອງຂໍອຸທອນ, ແລະ ຄຳປະກາດທີ່ບອກວ່າຄອບຄົວອາດຈະສະໝັກຂໍເອົາຄືນໃໝ່ການຊ່ວຍເຫຼືອໃນເລື່ອງອາຫານຟຣີ ແລະ ໃນລາຄາຜ່ອນໄດ້ທຸກເວລາໃນລະຫວ່າງສົກຮຽນ. ຄົວເຮືອນທີ່ມີເດັກນ້ອຍຜູ້ໄດ້ຮັບການອະນຸມັດສຳລັບການຊ່ວຍເຫຼືອດ້ານອາຫານຟຣີ ຫຼື ໃນລາຄາຜ່ອນ ອາດຈະໄດ້ຮັບການແຈ້ງບອກເປັນລາຍລັກອັກສອນ ຫຼື ໂດຍປາກເປົ່າ.

[INSERT SCHOOL DISTRICT LETTERHEAD]

ສະບາຍດີພໍ່ແມ່/ຜູ້ປົກຄອງ:

ເດັກນ້ອຍຕ້ອງການອາຫານທີ່ດີຕໍ່ສຸຂະພາບເພື່ອຮຽນໜັງສື. [Name of School] ໃຫ້ອາຫານທີ່ເປັນປະໂຫຍດຕໍ່ສຸຂະພາບໃນທຸກໆມື້ເຊົ້າ ຮຽນ. ອາຫານເຊົ້າລາຄາ [$]; ອາຫານທ່ຽງລາຄາ [$]. ເດັກຂອງທ່ານອາດຈະມີຄຸນສົມບັດໄດ້ຮັບອາຫານຟຣີ ຫຼື ອາຫານໃນລາຄາຜ່ອນ. ລາ ຄາຜ່ອນແມ່ນ [$] ສຳລັບອາຫານເຊົ້າ ແລະ [$] ສຳລັບອາຫານທ່ຽງ.

1. ຂ້ອຍຈຳເປັນຕ້ອງຕື່ມຄຳຮ້ອງສະໝັກຂໍເອົາອາຫານສຳລັບເດັກແຕ່ລະຄົນບໍ? ບໍ່, ຈົ່ງເຮັດສຳເລັດຄຳຮ້ອງສະໝັກເພື່ອຂໍເອົາ ອາຫານຟຣີ ຫຼື ອາຫານລາຄາຜ່ອນ. *ນຳໃຊ້ຄຳຮ້ອງສະໝັກຂໍເອົາອາຫານຟຣີ ແລະ ລາຄາຜ່ອນໃບດຽວສຳລັບນັກຮຽນທຸກຄົນໃນຄົວ ເຮືອນຂອງທ່ານ.* ພວກເຮົາບໍ່ສາມາດອະນຸມັດຄຳຮ້ອງສະໝັກທີ່ບໍ່ສຳເລັດສົມບູນ, ສະນັ້ນ ຈົ່ງໃຫ້ແນ່ໃຈວ່າໄດ້ຕື່ມທຸກຂໍ້ມູນທີ່ຕ້ອງໄດ້ ຕື່ມ. ຈາກນັ້ນ ສົ່ງຄຳຮ້ອງສະໝັກທີ່ເຮັດສຳເລັດແລ້ວຫາ: [name, address, phone number].

2. ໃຜແດ່ສາມາດໄດ້ຮັບອາຫານຟຣີ? ເດັກທັງໝົດໃນຄົວເຮືອນທີ່ໄດ້ຮັບການຊ່ວຍເຫຼືອຈາກ [State SNAP], [the Food Distribution Program on Indian Reservations] ຫຼື [State TANF], ສາມາດໄດ້ຮັບອາຫານຟຣີ ໂດຍບໍ່ສົນເລື່ອງລາຍຮັບຂອງ ທ່ານ. ນອກນັ້ນ, ເດັກຂອງທ່ານຍັງສາມາດໄດ້ຮັບອາຫານຟຣີ ຖ້າລາຍຮັບລວມຍອດຂອງຄົວເຮືອນທ່ານແມ່ນຢູ່ພາຍໃນຂອບເຂດ ກຳນົດທີ່ໄດ້ຮັບອາຫານຟຣີ ໃນຂໍ້ແນະນຳເລື່ອງເກນລາຍຮັບຂອງລັດຖະບານກາງ.

3. ເດັກທີ່ເປັນລູກລ້ຽງຫຼືເດັກອຸປະຖຳສາມາດໄດ້ຮັບອາຫານຟຣີບໍ? ແມ່ນ, ເດັກທີ່ເປັນລູກລ້ຽງຫຼືເດັກອຸປະຖຳທີ່ຢູ່ພາຍໃຕ້ຄວາມ ຮັບຜິດຊອບຂອງໝ່ວຍງານດູແລກາອຸປະຖຳເດັກ ຫຼື ສານ ແມ່ນມີສິດໄດ້ຮັບອາຫານຟຣີ. ເດັກທີ່ເປັນລູກລ້ຽງຢູ່ໃນຄົວເຮືອນກໍ່ມີສິດໄດ້ ຮັບອາຫານຟຣີ ໂດຍບໍ່ສົນເລື່ອງລາຍຮັບ.

4. ເດັກບໍ່ມີທີ່ຢູ່ອາໃສ, ເດັກໜີຈາກເຮືອນ ແລະ ເດັກທີ່ເປັນຜູ້ອົບພະຍົບເຂົ້າເມືອງສາມາດໄດ້ຮັບອາຫານຟຣີບໍ? ແມ່ນ, ເດັກນ້ອຍ ຜູ້ທີ່ຕອບສະໜອງໄດ້ນິຍາມຄວາມໝາຍຂອງຜູ້ບໍ່ມີທີ່ຢູ່ອາໃສ, ຜູ້ໜີຈາເຮືອນ, ຫຼື ຜູ້ອົບພະຍົບ ແມ່ນມີຄຸນສົມບັດໄດ້ຮັບອາຫານຟຣີ. ຖ້າທ່ານບໍ່ໄດ້ຮັບການແຈ້ງບອກວ່າເດັກຂອງທ່ານຈະໄດ້ຮັບອາຫານຟຣີ, ກະລຸນາ ໂທຫາ ຫຼື ອີເມວຫາ [school, homeless liaison or migrant coordinator information] ເພື່ອເບິ່ງວ່າພວກເຂົາມີສິດໄດ້ຮັບຫຼືບໍ່.

5. ໃຜແດ່ສາມາດໄດ້ຮັບອາຫານໃນລາຄາຜ່ອນ? ເດັກຂອງທ່ານສາມາດໄດ້ຮັບອາຫານໃນລາຄາຕ່ຳຖ້າລາຍຮັບຂອງຄົວເຮືອນທ່ານ ແມ່ນຢູ່ພາຍຂອບເຂດກຳນົດທີ່ໄດ້ຮັບອາຫານລາຄາຜ່ອນໃນຕາຕະລາງລາຍຮັບທີ່ມີສິດໄດ້ຮັບຂອງລັດຖະບານກາງ, ທີ່ມີໃນຄຳຮ້ອງ ສະໝັກນີ້.

6. ຂ້ອຍຄວນຈະຕື່ມຄຳຮ້ອງສະໝັກບໍ ຖ້າຂ້ອຍໄດ້ຮັບຈົດໝາຍໃນສົກຮຽນນີ້ ທີ່ບອກວ່າເດັກຂອງຂ້ອຍໄດ້ຮັບອະນຸມັດສຳລັບອາຫານຟຣີ ແລ້ວ? ກະລຸນາ ອ່ານຈົດໝາຍທີ່ທ່ານໄດ້ຮັບໃຫ້ລະອຽດ ແລະ ປະຕິບັດຕາມຄຳແນະນຳໃນຈົດໝາຍນັ້ນ. ໂທຫາໂຮງຮຽນທີ່ [phone number] ຖ້າທ່ານມີຄຳຖາມ.

7. ຄຳຮ້ອງສະໝັກຂອງເດັກຂ້ອຍໄດ້ຮັບອະນຸມັດໃນປີກ່ອນ. ຂ້ອຍຈຳເປັນຕ້ອງໄດ້ຕື່ມຄຳຮ້ອງສະໝັກໃໝ່ອີກບໍ່ໃນປີນີ້? ແມ່ນ. ຄຳຮ້ອງ ສະໝັກຂອງເດັກທ່ານແມ່ນໄດ້ຮັບອະນຸມັດສຳລັບສົກຮຽນນັ້ນ ແລະ ສຳລັບສອງສາມມື້ທຳອິດຂອງສົກຮຽນນີ້ເທົ່ານັ້ນ. ທ່ານຕ້ອງໄດ້ ສົ່ງຄຳຮ້ອງສະໝັກໃໝ່ເຂົ້າມາ ເວັ້ນເສຍແຕ່ວ່າທາງໂຮງຮຽນໄດ້ແຈ້ງບອກທ່ານວ່າເດັກຂອງທ່ານມີສິດໄດ້ຮັບສຳລັບສົກຮຽນໃໝ່ນີ້.

8. ຂ້ອຍໄດ້ຮັບ WIC. ເດັກຂອງຂ້ອຍສາມາດໄດ້ຮັບອາຫານຟຣີບໍ? ເດັກໃນຄົວເຮືອນທີ່ເຂົ້າຮ່ວມໃນ WIC ອາດຈະ ມີສິດໄດ້ຮັບ ອາຫານຟຣີ ຫຼື ໃນລາຄາຜ່ອນ. ກະລຸນາ ຕື່ມຄຳຮ້ອງສະໝັກ.

9. ຂໍ້ມູນທີ່ຂ້ອຍໃຫ້ຈະຖືກກວດກາບໍ? ແມ່ນແລ້ວ ແລະ ພວກເຮົາອາດຈະຮ້ອງຂໍໃຫ້ທ່ານສົ່ງຫຼັກຖານເປັນລາຍລັກອັກສອນນຳອີກ.

10. ຖ້າຂ້ອຍບໍ່ມີຄຸນສົມບັດໄດ້ຮັບໃນຕອນນີ້, ຂ້ອຍອາດຈະສະໝັກຂໍເອົາໃນເວລາຕໍ່ມາໄດ້ບໍ? ໄດ້, ທ່ານອາດຈະສະໝັກຂໍເອົາໃນເວລາໃດກໍ່ໄດ້ໃນລະຫວ່າງສົກປີຮຽນ. ຕົວຢ່າງ, ເດັກທີ່ພໍ່ແມ່ ຫຼື ຜູ້ປົກຄອງກາຍເປັນຜູ້ຫວ່າງງານ ກໍ່ອາດຈະມີສິດໄດ້ຮັບອາຫານຟຣີ ຫຼື ອາຫານລາຄາຜ່ອນ ຖ້າລາຍຮັບຄົວເຮືອນຕົກລົງຕ່ຳກວ່າຂອບເຂດກຳນົດດ້ານລາຍຮັບ.

11. ຈະເປັນແນວໃດຖ້າຂ້ອຍບໍ່ເຫັນດີນຳການຕັດສິນຂອງໂຮງຮຽນກ່ຽວກັບຄຳຮ້ອງສະໝັກຂອງຂ້ອຍ? ທ່ານຄວນໂອ້ລົມກັບພະນັກງານຂອງໂຮງຮຽນ. ນອກນັ້ນ ທ່ານອາດຈະຮ້ອງຂໍໃຫ້ມີການໄຕ່ສວນ ໂດຍການໂທຫາ ຫຼື ຂຽນຫາ: [name, address, phone number, e-mail].

12. ຂ້ອຍອາດຈະສະໝັກໄດ້ບໍ່ຖ້າໃຜຜູ້ໜຶ່ງຢູ່ໃນຄົວເຮືອນຂອງຂ້ອຍບໍ່ແມ່ນພົນລະເມືອງສະຫະລັດ? ໄດ້. ທ່ານ ຫຼື ເດັກຂອງທ່ານບໍ່ຈຳເປັນຕ້ອງແມ່ນພົນລະເມືອງສະຫະລັດເພື່ອໃຫ້ມີຄຸນສົມບັດໄດ້ຮັບອາຫານຟຣີ ຫຼື ລາຄາຜ່ອນ.

13. ໃຜແດ່ທີ່ຂ້ອຍຄວນເອົາລວມເຂົ້າເປັນສະມາຊິກຂອງຄົວເຮືອນຂອງຂ້ອຍ? ທ່ານຕ້ອງລວມເອົາທຸກໆຄົນທີ່ອາໃສຢູ່ໃນຄົວເຮືອນຂອງທ່ານ, ກ່ຽວຂ້ອງ ຫຼື ບໍ່ກ່ຽວຂ້ອງ (ເຊັ່ນວ່າ ພໍ່ເຖົ້າແມ່ເຖົ້າ, ຍາດພີ່ນ້ອງຄົນອື່ນ ຫຼື ໝູ່ເພື່ອນ) ຜູ້ທີ່ຮ່ວມລາຍຮັບແລະລາຍຈ່າຍນຳກັນ. ທ່ານຕ້ອງໄດ້ນັບລວມຕົວທ່ານເອງ ແລະ ເດັກນ້ອຍທຸກຄົນທີ່ອາໃສຢູ່ນຳທ່ານ. ຖ້າທ່ານອາໃສຢູ່ຮ່ວມກັບຄົນອື່ນຜູ້ທີ່ມີເສດຖະກິດເປັນເອກະລາດຈາກທ່ານ (ຕົວຢ່າງ, ບຸກຄົນຜູ້ທີ່ທ່ານບໍ່ໄດ້ລ້ຽງດູ, ຜູ້ທີ່ບໍ່ໄດ້ຮ່ວມລາຍຮັບນຳທ່ານ ຫຼື ເດັກນ້ອຍຂອງທ່ານ, ແລະ ຜູ້ທີ່ຮ່ວມຈ່າຍລາຍຈ່າຍຕາມສ່ວນຂອງເຂົາເຈົ້າ), ບໍ່ໃຫ້ນັບລວມເອົາເຂົາເຈົ້າ.

14. ຈະເປັນແນວໃດຖ້າລາຍຮັບຂອງຂ້ອຍບໍ່ມັກຈະເທົ່າເດີມ? ໃຫ້ບອກຈຳນວນທີ່ປົກກະຕິແລ້ວທ່ານໄດ້ຮັບ. ຕົວຢ່າງ, ປົກກະຕິແລ້ວທ່ານໄດ້ຮັບ $1000 ຕໍ່ເດືອນ, ແຕ່ທ່ານບໍ່ຂາດວຽກຈຳນວນໜຶ່ງໃນເດືອນທີ່ຜ່ານມາ ແລະ ພຽງແຕ່ໄດ້ຮັບ $900, ໃຫ້ຂຽນບອກວ່າທ່ານໄດ້ຮັບ $1000 ຕໍ່ເດືອນ. ຖ້າທ່ານໄດ້ຮັບເງິນລ່ວງເວລາຢ່າງເປັນປົກກະຕິ, ໃຫ້ນັບລວມເອົາມັນ, ແຕ່ຢ່ານັບລວມເອົາມັນ ຖ້າທ່ານພຽງແຕ່ເຮັດວຽກລ່ວງເວລາໃນບາງຄັ້ງຄາວ. ຖ້າທ່ານສູນເສຍວຽກເຮັດ ຫຼື ຖືກຫຼຸດຜ່ອນຊົ່ວໂມງເຮັດວຽກ ຫຼື ຄ່າຈ້າງ, ໃຫ້ນຳໃຊ້ເງິນລາຍຮັບໃນປະຈຸບັນຂອງທ່ານ.

15. ພວກເຮົາເປັນທະຫານ. ພວກເຮົາຕ້ອງນັບເອົາເງິນອຸດໜູນບ່ອນຢູ່ອາໃສຂອງພວກເຮົາເປັນລາຍຮັບບໍ? ຖ້າໄດ້ຮັບເງິນອຸດໜູນບ່ອນຢູ່ອາໃສຢູ່ນອກຖານທັບ, ເງິນອຸດໜູນນັ້ນຕ້ອງໄດ້ນັບລວມເປັນເງິນລາຍຮັບ. ແນວໃດກໍ່ຕາມ, ຖ້າທີ່ຢູ່ອາໃສຂອງທ່ານແມ່ນສ່ວນໜຶ່ງຂອງໂຄງການ Military Housing Privatization Initiative, ຢ່ານັບເອົາເງິນອຸດໜູນທີ່ຢູ່ອາໃສເປັນເງິນລາຍຮັບ.

16. ຄູ່ສົມລົດຂອງຂ້ອຍຖືກສົ່ງໄປປະຕິບັດໜ້າທີ່ໃນເຂດສູ້ຮົບ. ເງິນຄ່າສູ້ຮົບຄວນຖືກນັບເປັນເງິນລາຍຮັບຂອງຄອບຄົວບໍ? ບໍ່, ຖ້າເງິນສູ້ຮົບໄດ້ຮັບເປັນສ່ວນເພີ່ມເຕີມຕໍ່ກັບເງິນຄ່າຈ້າງພື້ນຖານຂອງລາວເນື່ອງຈາກການໄປປະຕິບັດໜ້າທີ່ ແລະ ມັນບໍ່ໄດ້ຮັບກ່ອນທີ່ລາວຈະຖືກສົ່ງໄປປະຕິບັດໜ້າທີ່, ເງິນຄ່າສູ້ຮົບແມ່ນບໍ່ຖືກນັບເປັນເງິນລາຍຮັບ. ຕິດຕໍ່ຫາໂຮງຮຽນຂອງທ່ານສຳລັບຂໍ້ມູນທົ່ວໄປ.

17. ຄອບຄົວຂອງຂ້ອຍຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມ. ມີໂຄງການອື່ນບໍທີ່ພວກເຮົາອາດຈະສາມາດສະໝັກຂໍເອົາການຊ່ວຍເຫຼືອໄດ້? ເພື່ອຊອກຮູ້ກ່ຽວກັບວິທີສະໝັກຂໍເອົາ [State SNAP] ຫຼື ຜົນປະ�โຫຍດການຊ່ວຍເຫຼືອອື່ນ, ໃຫ້ຕິດຕໍ່ຫາຫ້ອງການການຊ່ວຍເຫຼືອເຂດທ້ອງຖິ່ນຂອງທ່ານ ຫຼື ໂທຫາ [State hotline number].

ຖ້າທ່ານມີຄຳຖາມອື່ນ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ໃຫ້ໂທຫາ [phone number].

Si necesita ayuda, por favor llame al teléfono: [phone number].

Si vous voudriez d'aide, contactez nous au numero: [phone number].

ດ້ວຍຄວາມຮັກແພງ,

[signature]

ຄຳແນະນຳສຳລັບການສະໝັກຂໍເອົາ

ສະມາຊິກຄົວເຮືອນແມ່ນເດັກ ຫຼື ຜູ້ໃຫຍ່ທີ່ອາໃສຢູ່ນຳທ່ານ.

ຖ້າຄົວເຮືອນຂອງທ່ານໄດ້ຮັບການຊ່ວຍເຫຼືອຈາກ [State SNAP], ຫຼື [State TANF] [OR THE FOOD DISTRIBUTION PROGRAM ON INDIAN RESERVATIONS (FDPIR)], ປະຕິບັດຕາມ ຈົ່ງປະຕິບັດຕາມຄຳແນະນຳຕໍ່ໄປນີ້:

ສ່ວນທີ 1: ລະບຸສະມາຊິກຄົວເຮືອນທັງໝົດ ແລະ ຊື່ຂອງໂຮງຮຽນສຳລັບເດັກແຕ່ລະຄົນ.
ສ່ວນທີ 2: ລະບຸເລກທີກຳລະນີສຳລັບສະມາຊິກຄົວເຮືອນແຕ່ລະຄົນ (ລວມທັງຜູ້ໃຫຍ່) ທີ່ໄດ້ຮັບການຊ່ວຍເຫຼືອ [State SNAP] ຫຼື [State TANF] ຫຼື [FDPIR].
ສ່ວນທີ 3: ຂ້າມສ່ວນນີ້.
ສ່ວນທີ 4: ຂ້າມສ່ວນນີ້.
ສ່ວນທີ 5: ເຊັນແບບຟອມ. ສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມແມ່ນ**ບໍ່**ຈຳເປັນ.
ສ່ວນທີ 6: ຕອບຄຳຖາມນີ້ ຖ້າທ່ານເລືອກທີ່ຈະຕອບ.

ຖ້າບໍ່ມີໃຜໃນຄົວເຮືອນຂອງທ່ານໄດ້ຮັບຜົນປະໂຫຍດ [State SNAP] ຫຼື [State TANF] ແລະ ຖ້າເດັກໃດໜຶ່ງໃນຄົວເຮືອນຂອງທ່ານ ເປັນເດັກຂາດທີ່ຢູ່ອາໃສ, ເດັກອົບພະຍົບ ຫຼື ໜີອອກຈາກເຮືອນ, ໃຫ້ປະຕິບັດຕາມຄຳແນະນຳເຫຼົ່ານີ້:

ສ່ວນທີ 1: ລະບຸສະມາຊິກຄົວເຮືອນທັງໝົດ ແລະ ຊື່ຂອງໂຮງຮຽນສຳລັບເດັກແຕ່ລະຄົນ.
ສ່ວນ 2: ຂ້າມສ່ວນນີ້.
ສ່ວນທີ 3: ຖ້າເດັກໃດໜຶ່ງທີ່ທ່ານກຳລັງສະໝັກໃຫ້ແມ່ນເດັກຂາດທີ່ຢູ່ອາໃສ, ເດັກອົບພະຍົບ ຫຼື ເດັກໜີອອກຈາກເຮືອນ ໃຫ້ໝາຍເອົາຫ້ອງທີ່ເໝາະສົມ ແລະ ໂທຫາ [your school, homeless liaison, migrant coordinator].
ສ່ວນທີ 4: ເຮັດສຳເລັດພຽງແຕ່ຖ້າວ່າເດັກໃນຄົວເຮືອນຂອງທ່ານບໍ່ມີສິດໄດ້ຮັບພາຍໃຕ້ສ່ວນທີ 3. ເບິ່ງຄຳແນະນຳສຳລັບຄົວເຮືອນອື່ນທັງໝົດ.
ສ່ວນທີ 5: ເຊັນແບບຟອມ. ສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມແມ່ນບໍ່ຈຳເປັນ ຖ້າທ່ານບໍ່ຈຳເປັນຕ້ອງຕື່ມໃນສ່ວນທີ 4.
ສ່ວນທີ 6: ຕອບຄຳຖາມນີ້ ຖ້າທ່ານເລືອກທີ່ຈະຕອບ.

ຖ້າທ່ານກຳລັງສະໝັກໃຫ້ເດັກທີ່ເປັນລູກລ້ຽງ, ໃຫ້ປະຕິບັດຕາມຄຳແນະນຳເຫຼົ່ານີ້:

ຖ້າເດັກ<u>ທັງໝົດ</u>ໃນຄົວເຮືອນແມ່ນລູກລ້ຽງ:
ສ່ວນທີ 1: ລະບຸສະມາຊິກຄົວເຮືອນທັງໝົດ ແລະ ຊື່ຂອງໂຮງຮຽນສຳລັບເດັກແຕ່ລະຄົນ. ໝາຍເອົາຫ້ອງທີ່ຊີ້ບອກວ່າເດັກນັ້ນເປັນລູກລ້ຽງ.
ສ່ວນທີ 2: ຂ້າມສ່ວນນີ້.
ສ່ວນທີ 3: ຂ້າມສ່ວນນີ້.
ສ່ວນທີ 4: ຂ້າມສ່ວນນີ້.
ສ່ວນທີ 5: ເຊັນແບບຟອມ. ສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມແມ່ນ**ບໍ່**ຈຳເປັນ.
ສ່ວນທີ 6: ຕອບຄຳຖາມນີ້ ຖ້າທ່ານເລືອກທີ່ຈະຕອບ.

ຖ້າເດັກບາງຄົນໃນຄົວເຮືອນແມ່ນເດັກທີ່ເປັນລູກລ້ຽງ:
ສ່ວນທີ 1: ລະບຸສະມາຊິກຄົວເຮືອນທັງໝົດ ແລະ ຊື່ຂອງໂຮງຮຽນສຳລັບເດັກແຕ່ລະຄົນ. ສຳລັບບຸກຄົນໃດໆ ລວມທັງເດັກນ້ອຍ ທີ່ບໍ່ມີລາຍຮັບ, ທ່ານຕ້ອງໄດ້ໝາຍເອົາຫ້ອງ "ບໍ່ມີລາຍຮັບ". ໝາຍເອົາຫ້ອງຖ້າເດັກແມ່ນລູກລ້ຽງ.
ສ່ວນທີ 2: ຖ້າຄົວເຮືອນບໍ່ມີເລກທີກຳລະນີ, ໃຫ້ຂ້າມສ່ວນນີ້.
ສ່ວນທີ 3: ຖ້າເດັກໃດໜຶ່ງທີ່ທ່ານສະໝັກໃຫ້ແມ່ນເດັກຂາດທີ່ຢູ່ອາໃສ, ເດັກອົບພະຍົບ ຫຼື ເດັກໜີອອກຈາກເຮືອນ ໃຫ້ໝາຍເອົາຫ້ອງທີ່ເໝາະສົມ ແລະ ໂທຫາ [your school, homeless liaison, migrant coordinator]. ຖ້າບໍ່ແມ່ນ, ໃຫ້ຂ້າມສ່ວນນີ້.

ສ່ວນທີ 4: ປະຕິບັດຕາມ ຄຳແນະນຳເຫຼົ່ານີ້ເພື່ອລາຍງານລາຍຮັບທັງໝົດຂອງຄົວເຮືອນຈາກເດືອນນີ້ ຫຼື ເດືອນກ່ອນ.

- **ຫ້ອງ 1–ຊື່:** ບອກຊື່ສະມາຊິກທຸກຄົນທີ່ມີລາຍຮັບ.
  ຫ້ອງ 2 –ລາຍຮັບລວມຍອດ ແລະ ມັນໄດ້ຮັບເລື້ອຍໆສໍ່າໃດ: ສຳລັບສະມາຊິກແຕ່ລະຄົນ, ໃຫ້ບອກລາຍຮັບແຕ່ລະປະເພດທີ່ໄດ້ຮັບສຳລັບເດືອນ. ທ່ານຕ້ອງບອກພວກເຮົາວ່າເງິນນັ້ນໄດ້ຮັບເລື້ອຍໆສໍ່າໃດ—ທຸກໆອາທິດ, ທຸກໆສອງອາທິດ, ສອງຄັ້ງຕໍ່ເດືອນ ຫຼື ທຸກໆເດືອນ. ສຳລັບເງິນທີ່ຫາໄດ້, ໃຫ້ແນ່ໃຈວ່າໄດ້ລະບຸ **ລາຍຮັບລວມຍອດ,** ບໍ່ແມ່ນສະເພາະແຕ່ເງິນທີ່ເອົາມາເຮືອນ. ລາຍຮັບລວມຍອດແມ່ນຈຳນວນເງິນທັງໝົດທີ່ໄດ້ຮັບ*ກ່ອນ*ການຫັກພາສີ ແລະການຫັກລົບອື່ນໆ. ທ່ານຄວນຈະສາມາດເຫັນມັນໃນຫົວສົ້ນໃບຮັບເງິນຂອງທ່ານ ຫຼື ນາຍຈ້າງຂອງທ່ານສາມາດບອກທ່ານ. ສຳລັບລາຍຮັບອື່ນ, ລະບຸຈຳນວນເງິນທີ່ແຕ່ລະຄົນໄດ້ຮັບສຳລັບເດືອນດັ່ງກ່າວຈາກສະຫວັດດີການ, ເງິນລ້ຽງດູລູກ, ເງິນຄ່າລ້ຽງເມຍຫຼືຜົວ, ເງິນເບ້ຍບຳນານ, ເງິນກະສຽນວຽກ, ເງິນປະກັນສັງຄົມ, ເງິນອຸດໜູນລາຍຮັບເສີມ (SSI), ເງິນອຸດໜູນນັກຮົບເກົ່າ (ເງິນຊ່ວຍເຫຼືອ VA), ແລະ ເງິນອຸດໜູນຄວາມພິການ. ພາຍໃຕ້ຂໍ້ *ລາຍຮັບອື່ນທັງໝົດ*, ບອກເງິນຊົດເຊີຍຜູ້ອອກແຮງງານ, ເງິນຊ່ວຍເຫຼືອການຫວ່າງງານ ຫຼື ຜົນປະ�โຫຍດການຢຸດງານປະທ້ວງ, ເງິນປະກອບສ່ວນປົກກະຕິຈາກຄົນຜູ້ທີ່ບໍ່ໄດ້ອາໃສຢູ່ໃນຄົວເຮືອນຂອງທ່ານ, ແລະ ທຸກລາຍຮັບອື່ນ. ບໍ່ໃຫ້ນັບລວມເອົາລາຍຮັບຈາກ SNAP, FDPIR, WIC, ເງິນຊ່ວຍເຫຼືອດ້ານການສຶກສາຈາກລັດຖະບານກາງ ແລະ ເງິນຄ່າອຸປະຖຳເດັກທີ່ໄດ້ຮັບໂດຍຄອບຄົວຈາກໜ່ວຍງານຈັດຫາບ່ອນອຸປະຖຳເດັກ. ສຳລັບຜູ້ເຮັດທຸລະກິດສ່ວນຕົວເທົ່ານັ້ນ, ພາຍໃຕ້ຂໍ້ *ເງິນຫາໄດ້ຈາກການເຮັດວຽກ*, ໃຫ້ລາຍງານລາຍຮັບຫຼັງຈາກຫັກຄ່າໃຊ້ຈ່າຍ. ນີ້ແມ່ນສຳລັບທຸລະກິດ, ຟາມ, ຫຼື ຊັບສິນໃຫ້ເຊົ່າຂອງທ່ານ. ຖ້າທ່ານຢູ່ໃນໂຄງການພິເສດສຳລັບທີ່ພັກອາໃສຂອງທະຫານ [Military Privatized Housing Initiative] ຫຼື ໄດ້ຮັບເງິນຄ່າສູ້ຮົບ, ບໍ່ໃຫ້ນັບເອົາເງິນໜູນເຫຼົ່ານີ້ເປັນລາຍຮັບ.

ສ່ວນທີ 5: ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຕ້ອງເຊັນຊື່ໃນແບບຟອມ ແລະ ບອກສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມ (ຫຼື ໝາຍເອົາຫ້ອງດັ່ງກ່າວຖ້າຜູ້ນັ້ນບໍ່ມີລະຫັດປະກັນສັງຄົມ).

ສ່ວນທີ 6: ຕອບຄຳຖາມນີ້, ຖ້າທ່ານເລືອກທີ່ຈະຕອບ.

ຄົວເຮືອນອື່ນທັງໝົດ, ລວມທັງຄົວເຮືອນ WIC, ໃຫ້ປະຕິບັດຕາມຄຳແນະນຳເຫຼົ່ານີ້:

ສ່ວນທີ 1: ລະບຸສະມາຊິກຄົວເຮືອນທັງໝົດ ແລະ ຊື່ຂອງໂຮງຮຽນສຳລັບເດັກແຕ່ລະຄົນ. ສຳລັບບຸກຄົນໃດໆ ລວມທັງເດັກນ້ອຍ ທີ່ບໍ່ມີລາຍຮັບ, ທ່ານຕ້ອງໄດ້ໝາຍເອົາຫ້ອງ "ບໍ່ມີລາຍຮັບ".

ສ່ວນທີ 2: ຖ້າຄົວເຮືອນບໍ່ມີເລກທີກຳລະນີ, ໃຫ້ຂ້າມສ່ວນນີ້.

ສ່ວນທີ 3: ຖ້າເດັກທີ່ທ່ານສະໝັກໃຫ້ແມ່ນເດັກຂາດທີ່ຢູ່ອາໃສ, ເດັກອົບພະຍົບ ຫຼື ເດັກໜີອອກຈາກເຮືອນ ໃຫ້ໝາຍເອົາຫ້ອງທີ່ເໝາະສົມ ແລະ ໂທຫາ [your school, homeless liaison, migrant coordinator]. ຖ້າບໍ່ແມ່ນ, ໃຫ້ຂ້າມສ່ວນນີ້.

ສ່ວນທີ 4: ປະຕິບັດຕາມ ຄຳແນະນຳເຫຼົ່ານີ້ເພື່ອລາຍງານລາຍຮັບທັງໝົດຂອງຄົວເຮືອນຈາກເດືອນນີ້ ຫຼື ເດືອນກ່ອນ.

- **ຫ້ອງ 1–ຊື່:** ບອກຊື່ສະມາຊິກທຸກຄົນທີ່ມີລາຍຮັບ.
- **ຫ້ອງ 2 –ລາຍຮັບລວມຍອດ ແລະ ມັນໄດ້ຮັບເລື້ອຍໆສໍ່າໃດ:** ສຳລັບສະມາຊິກແຕ່ລະຄົນ, ໃຫ້ບອກລາຍຮັບແຕ່ລະປະເພດທີ່ໄດ້ຮັບສຳລັບເດືອນ. ທ່ານຕ້ອງບອກພວກເຮົາວ່າເງິນນັ້ນໄດ້ຮັບເລື້ອຍໆສໍ່າໃດ—ທຸກໆອາທິດ, ທຸກໆສອງອາທິດ, ສອງຄັ້ງຕໍ່ເດືອນ ຫຼື ທຸກໆເດືອນ. ສຳລັບເງິນທີ່ຫາໄດ້, ໃຫ້ແນ່ໃຈວ່າໄດ້ລະບຸ **ລາຍຮັບລວມຍອດ,** ບໍ່ແມ່ນສະເພາະແຕ່ເງິນທີ່ເອົາມາເຮືອນ. ລາຍຮັບລວມຍອດແມ່ນຈຳນວນເງິນທັງໝົດທີ່ໄດ້ຮັບ*ກ່ອນ*ການຫັກພາສີ ແລະການຫັກລົບອື່ນໆ. ທ່ານຄວນຈະສາມາດເຫັນມັນໃນຫົວສົ້ນໃບຮັບເງິນຂອງທ່ານ ຫຼື ນາຍຈ້າງຂອງທ່ານສາມາດບອກທ່ານ. ສຳລັບລາຍຮັບອື່ນ, ລະບຸຈຳນວນເງິນທີ່ແຕ່ລະຄົນໄດ້ຮັບສຳລັບເດືອນດັ່ງກ່າວຈາກສະຫວັດດີການ, ເງິນລ້ຽງດູລູກ, ເງິນຄ່າລ້ຽງເມຍຫຼືຜົວ, ເງິນເບ້ຍບຳນານ, ເງິນກະສຽນວຽກ, ເງິນປະກັນສັງຄົມ, ເງິນອຸດໜູນລາຍຮັບເສີມ (SSI), ເງິນອຸດໜູນນັກຮົບເກົ່າ (ເງິນຊ່ວຍເຫຼືອ VA), ແລະ ເງິນອຸດໜູນຄວາມພິການ. ພາຍໃຕ້ຂໍ້ *ລາຍຮັບອື່ນທັງໝົດ*, ບອກເງິນຊົດເຊີຍຜູ້ອອກແຮງງານ, ເງິນຊ່ວຍເຫຼືອການຫວ່າງງານ ຫຼື ຜົນປະ�โຫຍດການຢຸດງານປະທ້ວງ, ເງິນປະກອບສ່ວນປົກກະຕິຈາກຄົນຜູ້ທີ່ບໍ່ໄດ້ອາໃສຢູ່ໃນຄົວເຮືອນຂອງທ່ານ, ແລະ ທຸກລາຍຮັບອື່ນ. ບໍ່ໃຫ້ນັບລວມເອົາລາຍຮັບຈາກ SNAP, FDPIR, WIC, ເງິນຊ່ວຍເຫຼືອດ້ານການສຶກສາຈາກລັດຖະບານກາງ ແລະ ເງິນຄ່າອຸປະຖຳເດັກທີ່ໄດ້ຮັບໂດຍຄອບຄົວຈາກໜ່ວຍງານຈັດຫາບ່ອນອຸປະຖຳເດັກ. ສຳລັບຜູ້ເຮັດທຸລະກິດສ່ວນຕົວເທົ່ານັ້ນ, ພາຍໃຕ້ຂໍ້ *ເງິນຫາໄດ້ຈາກການເຮັດວຽກ*, ໃຫ້ລາຍງານລາຍຮັບຫຼັງຈາກຫັກຄ່າໃຊ້ຈ່າຍ. ນີ້ແມ່ນສຳລັບທຸລະກິດ, ຟາມ, ຫຼື ຊັບສິນໃຫ້ເຊົ່າຂອງທ່ານ. ບໍ່ໃຫ້ນັບລວມເອົາລາຍຮັບຈາກ SNAP, FDPIR, WIC, ເງິນຊ່ວຍເຫຼືອດ້ານການສຶກສາຈາກລັດຖະບານກາງ. ຖ້າທ່ານຢູ່ໃນ Military Privatized Housing Initiative ຫຼື ໄດ້ຮັບເງິນຄ່າສູ້ຮົບ, ບໍ່ໃຫ້ນັບເອົາເງິນໜູນເຫຼົ່ານີ້ເປັນລາຍຮັບ

ສ່ວນທີ 5: ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຕ້ອງເຊັນຊື່ໃນແບບຟອມ ແລະ ບອກສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມ (ຫຼື ໝາຍເອົາຫ້ອງດັ່ງກ່າວຖ້າຜູ້ນັ້ນບໍ່ມີລະຫັດປະກັນສັງຄົມ).

ສ່ວນທີ 6: ຕອບຄຳຖາມນີ້, ຖ້າທ່ານເລືອກທີ່ຈະຕອບ.

ຄຳຮ້ອງສະໝັກຂໍເອົາອາຫານຟຣີ ແລະ ອາຫານລາຄາຜ່ອນຢູ່ໂຮງຮຽນສຳລັບຄອບຄົວ

ສ່ວນທີ 1. ສະມາຊິກຄົວເຮືອນທັງໝົດ

ຊື່ຂອງສະມາຊິກຄົວເຮືອນ<u>ທັງໝົດ</u> (ຊື່ຕົ້ນ, ອັກສອນກາງ, ນາມສະກຸນ)	ຊື່ຂອງໂຮງຮຽນສຳລັບເດັກແຕ່ລະຄົນ/ຫຼື ຂີ້ບອກ "NA" ຖ້າເດັກບໍ່ໄດ້ເຂົ້າໂຮງຮຽນ	ໝາຍເອົາຖ້າເດັກອຸປະຖຳ (ຄວາມຮັບຜິດຊອບທາງກົດໝາຍຂອງໜ່ວຍງານສະຫວັດດີການ ຫຼື ສານ) * ຖ້າເດັກທັງໝົດທີ່ລະບຸລຸ່ມນີ້ແມ່ນເດັກອຸປະຖຳ, ໃຫ້ຂ້າມໄປສ່ວນທີ 5 ເພື່ອເຊັນຊື່ແບບຟອມນີ້.	ໝາຍເອົາຖ້າບໍ່ມີລາຍຮັບ
		❑	❑
		❑	❑
		❑	❑
		❑	❑
		❑	❑
		❑	❑

ສ່ວນທີ 2. ເງິນຊ່ວຍເຫຼືອ

ຖ້າສະມາຊິກໃດໆຂອງຄົວເຮືອນທ່ານໄດ້ຮັບເງິນຊ່ວຍເຫຼືອ , ຫຼື , ໃຫ້ບອກຊື່ ແລະ ເລກທີກຳລະນີສຳລັບບຸກຄົນຜູ້ທີ່ໄດ້ຮັບເງິນຊ່ວຍເຫຼືອ ແລະ **ຂ້າມໄປສ່ວນທີ 5**.
ຖ້າບໍ່ມີໃຜໄດ້ຮັບເງິນຊ່ວຍເຫຼືອເຫຼົ່ານີ້, ໃຫ້ຂ້າມໄປສ່ວນທີ 3.

ຊື່:_____ ເລກທີກຳລະນີ: _____

ສ່ວນທີ 3. ຖ້າເດັກໃດໜຶ່ງທີ່ທ່ານກຳລັງສະໝັກໃຫ້ແມ່ນເດັກຂາດທີ່ຢູ່ອາໃສ, ເດັກອົບພະຍົບ ຫຼື ເດັກໜີອອກຈາກເຮືອນ ໃຫ້ໝາຍເອົາທ້ອງທີ່ເໝາະສົມ ແລະ ໂທຫາ
ຂາດທີ່ຢູ່ອາໃສ ❑ ອົບພະຍົບ ❑ ໜີອອກຈາກເຮືອນ ❑

ສ່ວນທີ 4. ລາຍຮັບລວມຍອດທັງໝົດຂອງຄົວເຮືອນ. ທ່ານຕ້ອງບອກພວກເຮົາຈຳນວນເທົ່າໃດ ແລະ ໄດ້ຮັບເລື້ອຍໆສ່ຳໃດ.

1. ຊື່ (ບອກພຽງແຕ່ສະມາຊິກຄົວເຮືອນທີ່ມີລາຍຮັບເທົ່ານັ້ນ)	2. ລາຍຮັບລວມຍອດ ແລະ ໄດ້ຮັບມັນເລື້ອຍໆສ່ຳໃດ			
	ເງິນທີ່ໄດ້ຈາກການເຮັດວຽກກ່ອນການຫັກລົບ	ເງິນສະຫວັດດີການ, ເງິນຄ່າລ້ຽງລູກ, ເງິນຄ່າລ້ຽງເມຍ ຫຼືຜົວ	ເງິນບຳນານ, ເງິນກະສຽນວຽກ, ເງິນປະກັນສັງຄົມ, ເງິນ SSI, ເງິນຊ່ວຍເຫຼືອ VA	ລາຍຮັບອື່ນທັງໝົດ
(ຕົວຢ່າງ) Jane Smith	$<u>199.99/ອາທິດ</u>	$<u>149.99/ທຸກໆສອງອາທິດ</u>	$<u>99.99/ທຸກໆ ເດືອນ</u>	$<u>50.00/ທຸກໆ ເດືອນ</u>
	$	$	$	$
	$	$	$	$
	$	$	$	$
	$	$	$	$
	$	$	$	$
	$	$	$	$

ສ່ວນທີ 5. ລາຍເຊັນ ແລະ ສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມ (ຜູ້ໃຫຍ່ຕ້ອງໄດ້ເຊັນຊື່)

ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຕ້ອງໄດ້ເຊັນຊື່ໃນຄຳຮ້ອງສະໝັກ. **ຖ້າສ່ວນທີ 4 ບໍ່ໄດ້ເຮັດສຳເລັດ, ຜູ້ໃຫຍ່ທີ່ເຊັນຊື່ໃນແບບຟອມຍັງຕ້ອງໄດ້ບອກສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມຂອງຕົນເອງ ຫຼື ໝາຍເອົາຫ້ອງ "ຂ້ອຍບໍ່ມີລະຫັດປະກັນສັງຄົມ".** (ເບິ່ງຄຳຖະແຫຼງຢູ່ດ້ານຫຼັງຂອງໜ້າເຈ້ຍນີ້.)

ຂ້ອຍຂໍຢັ້ງຢືນ (ສັນຍາ) ວ່າທຸກຂໍ້ມູນໃນຄຳຮ້ອງສະໝັກນີ້ແມ່ນເປັນຄວາມຈິງ ແລະ ທຸກລາຍຮັບແມ່ນໄດ້ຖືກລາຍງານແລ້ວ. ຂ້ອຍເຂົ້າໃຈວ່າທາງໂຮງຮຽນຈະໄດ້ຮັບທຶນຈາກລັດຖະບານກາງ ອີງໃສ່ຂໍ້ມູນທີ່ຂ້ອຍໃຫ້. ຂ້ອຍເຂົ້າໃຈວ່າເຈົ້າໜ້າທີ່ຂອງໂຮງຮຽນອາດຈະກວດພົບສູດ (ກວດກາ) ເບິ່ງຄວາມຖືກຕ້ອງຂອງຂໍ້ມູນ. ຂ້ອຍເຂົ້າໃຈວ່າ ຖ້າຂ້ອຍເຈດຕະນາໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ເດັກຂອງຂ້ອຍອາດຈະສູນເສຍການຊ່ວຍເຫຼືອດ້ານອາຫານ, ແລະ ຂ້ອຍອາດຈະຖືກດຳເນີນຄະດີຕາມກົດໝາຍ.

ເຊັ່ນບ່ອນນີ້: _____ ຊື່ເປັນຕົວພິມ: _____

ວັນທີ: _____

ທີ່�อยู่: _____ ເບີໂທລະສັບ: _____

ເມືອງ: _____ ລັດ: _____ ລະຫັດເຂດໄປສະນີ: _____

ສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມ: * * * - * * - __ __ __ __ ❑ ຂ້ອຍບໍ່ມີລະຫັດປະກັນສັງຄົມ

ສ່ວນທີ 6. ຊົນເຜົ່າ ແລະ ເຊື້ອຊາດຂອງເດັກນ້ອຍ (ຕອບຫຼືບໍ່ຕອບກໍ່ໄດ້)

ເລືອກເອົາໜຶ່ງຊົນເຜົ່າ:	*ເລືອກເອົາໜຶ່ງ ຫຼື ຫຼາຍກວ່າ (ໂດຍບໍ່ຈຳແນກເລື່ອງຊົນເຜົ່າ):*		
❑ ສະເປນ/ລາຕິນ	❑ ຊາວອາຊີ	❑ ຊາວອິນເດຍ ເອເມລິກັນ ຫຼື ຊາວດັ້ງເດີມອາລັສກາ	❑ ຊາວຜິວສີ ຫຼື ອາເມລິກັນ ອາຟຣິກັນ
❑ ບໍ່ແມ່ນສະເປນ/ລາຕິນ	❑ ຊາວຜິວຂາວ	❑ ຊາວຮາວາຍດັ້ງເດີມ ຫຼື ຊາວເກາະປາຊິຟິກອື່ນ	

ຢ່າຕື່ມຂໍ້ມູນໃນສ່ວນນີ້. ນີ້ແມ່ນສຳລັບໃຫ້ທາງໂຮງຮຽນນຳໃຊ້ເທົ່ານັ້ນ.

Annual Income Conversion: Weekly x 52, Every 2 Weeks x 26, Twice A Month x 24 Monthly x 12

Total Income: _____ Per: ❑ Week, ❑ Every 2 Weeks, ❑ Twice A Month, ❑ Month, ❑ Year Household size: _____

Categorical Eligibility: ___ Date Withdrawn: _____Eligibility: Free___ Reduced___ Denied___

Reason: _____

Temporary: Free____ Reduced____ Time Period: _____ (expires after ____ days)

Determining Official's Signature: _____ Date: _____

Confirming Official's Signature: _____ Date: _____

Verifying Official's Signature: _____Date: _____

ເດັກຂອງທ່ານອາດຈະມີຄຸນສົມບັດໄດ້ຮັບອາຫານຟຣີ ຫຼື ໃນລາຄາຜ່ອນ ຖ້າລາຍຮັບຄົວເຮືອນຂອງທ່ານເທົ່າກັບ ຫຼື ຕ່ຳກວ່າຂອບເຂດກຳນົດໃນຕາຕະລາງນີ້.

ຕາຕະລາງລາຍຮັບສຳລັບການມີສິດໄດ້ຮັບການຊ່ວຍເຫຼືອສຳລັບສົກປີ _____			
ຂະໜາດຄົວເຮືອນ	ປະຈຳປີ	ປະຈຳເດືອນ	ປະຈຳອາທິດ
1			
2			
3			
4			
5			
6			
7			
8			
ແຕ່ລະຄົນທີ່ເພີ່ມເຂົ້າ:			

ກົດໝາຍວ່າດ້ວຍອາຫານທ່ຽງຢູ່ໂຮງຮຽນ [Richard B. Russell National School Lunch Act] ກຳນົດໃຫ້ມີຂໍ້ມູນດັ່ງກ່າວໃນຄຳຮ້ອງສະໝັກນີ້. ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນ, ແຕ່ຖ້າທ່ານບໍ່ໃຫ້, ພວກເຮົາກໍ່ບໍ່ສາມາດອະນຸມັດເດັກຂອງທ່ານສຳລັບອາຫານຟຣີ ຫຼື ອາຫານລາຄາຜ່ອນ. ທ່ານຕ້ອງລວມເອົາສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມ່ຂອງສະມາຊິກຄົວເຮືອນຜູ້ໃຫຍ່ຜູ້ທີ່ເຊັນຊື່ໃນແບບຟອມຄຳຮ້ອງສະໝັກນີ້. ສີ່ຕົວເລກສຸດທ້າຍຂອງລະຫັດປະກັນສັງຄົມແມ່ນບໍ່ຕ້ອງການເມື່ອທ່ານສະໝັກຂໍເອົາໃນນາມຂອງເດັກອຸປະຖຳຫຼືເດັກທີ່ເປັນລູກລ້ຽງ ຫຼື ທ່ານລະບຸເລກທີກຳລະນີຂອງໂຄງການຊ່ວຍເຫຼືອດ້ານ�โພຊະນະການເສີມ (SNAP), ໂຄງການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF) ຫຼື ໂຄງການແຈກຢາຍອາຫານໃນເຂດສະຫງວນສຳລັບຊາວພື້ນເມືອງອິນເດຍ (FDPIR) ຫຼື ສິ່ງລະບຸ FDPIR ອື່ນ ສຳລັບເດັກຂອງທ່ານ ຫຼື ເມື່ອຊີ້ບອກວ່າສະມາຊິກຜູ້ໃຫຍ່ໃນຄົວເຮືອນທີ່ເຊັນຊື່ໃນແບບຟອມຄຳຮ້ອງສະໝັກບໍ່ມີລະຫັດປະກັນສັງຄົມ. ພວກເຮົາຈະນຳໃຊ້ຂໍ້ມູນຂອງທ່ານເພື່ອກຳນົດຕັດສິນວ່າເດັກຂອງທ່ານມີສິດໄດ້ຮັບອາຫານຟຣີ ຫຼື ລາຄາຜ່ອນຫຼືບໍ່, ແລະ ສຳລັບການຄຸ້ມຄອງບໍລິຫານ ແລະ ການບັງຄັບໃຊ້ໂຄງການອາຫານເຊົ້າ ແລະ ອາຫານທ່ຽງ. ພວກເຮົາອາດຈະແລກປ່ຽນຂໍ້ມູນກ່ຽວກັບການມີສິດໄດ້ຮັບຂອງທ່ານກັບບັນດາໂຄງການການສຶກສາ, ສຸຂະພາບ, ແລະ �โພຊະນາການເພື່ອຊ່ວຍພວກເຂົາປະເມີນ, ໃຫ້ທຶນ ຫຼື ຕັດສິນກຳນົດຜົນປະ�โຫຍດສຳລັບ�โຄງການຂອງພວກເຂົາ, ຜູ້ກວດສອບບັນຊີສຳລັບການທົບທວນຄືນ�โຄງການ, ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍເພື່ອຊ່ວຍພວກເຂົາກວດກາການລະເມີດກົດລະບຽບ�โຄງການ.

ຄຳປະກາດກ່ຽວກັບການບໍ່ເລືອກປະຕິບັດ: ສິ່ງນີ້ອະທິບາຍສິ່ງທີ່ຕ້ອງເຮັດຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິບັດຕໍ່ຢ່າງບໍ່ຍຸຕິທຳ. "ອີງຕາມກົດໝາຍຂອງລັດຖະບານກາງ ແລະ ນະ�โยบายຂອງກະຊວງກະສິກຳແຫ່ງສະຫະລັດ, ສະຖາບັນນີ້ຖືກຫ້າມບໍ່ໃຫ້ເຮັດການເລືອກປະຕິບັດໃດໆບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ອາຍຸ ຫຼື ຄວາມພິການ. ເພື່ອຍື່ນຄຳຮ້ອງຮຽນເລື່ອງການຈຳແນກ, ໃຫ້ຂຽນຫາ USDA, Director, Office of Adjudication, 1400 Independence Avenue, SW, Washington, D.C. 20250-9410 ຫຼື �โທຫາເບີ�โທຟຣີ (866) 632-9992 (ສຽງ). ບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ ຫຼື ປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການ Federal Relay Service ທີ່ເບີ (800) 877-8339; ຫຼື (800) 845-6136 (ພາສາສະເປນ). USDA ແມ່ນນາຍจ้าง ແລະ ຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ."

ການແລກປ່ຽນຂໍ້ມູນກັບ MEDICAID/SCHIP

ສະບາຍດີພໍ່ແມ່/ຜູ້ປົກຄອງ:

ຖ້າເດັກຂອງທ່ານໄດ້ຮັບອາຫານຟຣີ ຫຼື ໃນລາຄາຜ່ອນ, ພວກເຂົາ<u>ອາດຈະ</u>ຍັງສາມາດໄດ້ຮັບປະກັນສຸຂະພາບຟຣີ ຫຼື ໃນລາຄາຕ່ຳ ຜ່ານໂຄງການ Medicaid ຫຼື ໂຄງການປະກັນສຸຂະພາບເດັກນ້ອຍຂອງລັດ (SCHIP). ເດັກນ້ອຍທີ່ມີປະກັນສຸຂະພາບແມ່ນມັກຈະໄດ້ຮັບການດູແລສຸຂະພາບຢ່າງເປັນປົກກະຕິ ແລະ ບໍ່ມັກຂາດໂຮງຮຽນເນື່ອງຈາກການເຈັບປ່ວຍ.

ເພາະວ່າປະກັນສຸຂະພາບແມ່ນສຳຄັນຫຼາຍຕໍ່ກັບຄວາມເປັນຢູ່ທີ່ດີຂອງເດັກນ້ອຍ, *ກົດໝາຍອະນຸຍາດໃຫ້ພວກເຮົາບອກ Medicaid ແລະ SCHIP ວ່າລູກຂອງທ່ານມີສິດໄດ້ຮັບອາຫານຟຣີ ຫຼື ລາຄາຜ່ອນ,* ***ເວັ້ນເສຍແຕ່ວ່າທ່ານບອກພວກເຮົາບໍ່ໃຫ້ບອກ.*** Medicaid ແລະ SCHIP ພຽງແຕ່ນຳໃຊ້ຂໍ້ມູນເພື່ອກຳນົດເດັກຜູ້ທີ່ອາດຈະມີສິດເຂົ້າຮ່ວມໂຄງການຂອງພວກເຂົາ. ພະນັກງານໂຄງການອາດຈະຕິດຕໍ່ຫາທ່ານເພື່ອສະເໜີໃຫ້ເດັກຂອງທ່ານຈົດທະບຽນເຂົ້າຮ່ວມໂຄງການພວກເຂົາ. ການຕື່ມຄຳຮ້ອງສະໝັກຂໍອາຫານຟຣີ ແລະ ອາຫານລາຄາຜ່ອນຢູ່ໂຮງຮຽນບໍ່ໄດ້ເປັນການລົງທະບຽນເດັກຂອງທ່ານເຂົ້າໃນໂຄງການປະກັນສຸຂະພາບແບບອັດຕະໂນມັດ.

ຖ້າທ່ານບໍ່ຕ້ອງການໃຫ້ພວກເຮົາແລກປ່ຽນຂໍ້ມູນຂອງທ່ານກັບ Medicaid ຫຼື SCHIP, ໃຫ້ຕື່ມແບບຟອມລຸ່ມນີ້ ແລະ ສົ່ງເຂົ້າມາ (ການສົ່ງແບບຟອມນີ້ຈະບໍ່ໄປປ່ຽນແປງເລື່ອງທີ່ເດັກຂອງທ່ານຈະໄດ້ຮັບອາຫານຟຣີ ຫຼື ອາຫານລາຄາຜ່ອນ).

❑ **ບໍ່! ຂ້ອຍບໍ່**ຕ້ອງການໃຫ້ແລກປ່ຽນຂໍ້ມູນຈາກຄຳຮ້ອງສະໝັກຂໍອາຫານຟຣີ ແລະ ອາຫານລາຄາຜ່ອນຢູ່ໂຮງຮຽນຂອງຂ້ອຍ ກັບທາງໂຄງການ Medicaid ຫຼື ໂຄງການປະກັນສຸຂະພາບເດັກຂອງລັດ.

ຖ້າທ່ານໝາຍເອົາວ່າ ບໍ່, ໃຫ້ຕື່ມແບບຟອມລຸ່ມນີ້ເພື່ອຮັບປະກັນວ່າຂໍ້ມູນຂອງທ່ານຈະບໍ່ຖືກແລກປ່ຽນສຳລັບເດັກທີ່ມີຊື່ລຸ່ມນີ້:

ຊື່ຂອງເດັກ: _____ ໂຮງຮຽນ: _____

ຊື່ຂອງເດັກ: _____ ໂຮງຮຽນ: _____

ຊື່ຂອງເດັກ: _____ ໂຮງຮຽນ: _____

ຊື່ຂອງເດັກ: _____ ໂຮງຮຽນ: _____

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ _____ ວັນທີ: _____

ຊື່ເປັນຕົວພິມ: _____

ທີ່ຢູ່: _____

ສຳລັບຂໍ້ມູນເພີ່ມເຕີມ, ທ່ານອາດຈະໂທຫາ [name] ທີ່ເບີ [phone] ຫຼື ອີເມວຫາ [e-mail address].

ໃຫ້ສົ່ງຄືນແບບຟອມນີ້ຫາ: [address] ພາຍໃນ [date].

ການແລກປ່ຽນຂໍ້ມູນກັບບັນດາໂຄງການອື່ນ

ສະບາຍດີພໍ່ແມ່/ຜູ້ປົກຄອງ:

ເພື່ອຊ່ວຍປະຢັດເວລາ ແລະ ຄວາມພະຍາຍາມ, ຂໍ້ມູນທີ່ທ່ານໃຫ້ໃນແບບຟອມສະໝັກຂໍເອົາອາຫານຟຣີ ແລະ ອາຫານລາຄາຜ່ອນຢູ່ໂຮງຮຽນອາດຈະຖືກເປີດເຜີຍແລກປ່ຽນກັບບັນດາໂຄງການອື່ນທີ່ເດັກຂອງທ່ານອາດຈະມີຄຸນສົມບັດເຂົ້າຮ່ວມ. ສຳລັບບັນດາໂຄງການຕໍ່ໄປນີ້, ພວກເຮົາຕ້ອງໄດ້ຮັບອະນຸຍາດຈາກທ່ານກ່ອນທີ່ຈະແລກປ່ຽນຂໍ້ມູນຂອງທ່ານໄດ້. ການສົ່ງແບບຟອມນີ້ຈະບໍ່ໄປປ່ຽນແປງເລື່ອງທີ່ເດັກຂອງທ່ານຈະໄດ້ຮັບອາຫານຟຣີ ຫຼື ອາຫານລາຄາຜ່ອນຫຼືບໍ່.

- ❑ ແມ່ນ! ຂ້ອຍ**ຕ້ອງການ**ໃຫ້ເຈົ້າໜ້າທີ່ໂຮງຮຽນແລກປ່ຽນຂໍ້ມູນຈາກຄຳຮ້ອງສະໝັກຂໍອາຫານຟຣີ ແລະ ອາຫານລາຄາຜ່ອນໃນໂຮງຮຽນຂອງຂ້ອຍກັບທາງ [name of program specific to your school].
- ❑ ແມ່ນ! ຂ້ອຍ**ຕ້ອງການ**ໃຫ້ເຈົ້າໜ້າທີ່ໂຮງຮຽນແລກປ່ຽນຂໍ້ມູນຈາກຄຳຮ້ອງສະໝັກຂໍອາຫານຟຣີ ແລະ ອາຫານລາຄາຜ່ອນໃນໂຮງຮຽນຂອງຂ້ອຍກັບທາງ [name of program specific to your school].
- ❑ ແມ່ນ! ຂ້ອຍ**ຕ້ອງການ**ໃຫ້ເຈົ້າໜ້າທີ່ໂຮງຮຽນແລກປ່ຽນຂໍ້ມູນຈາກຄຳຮ້ອງສະໝັກຂໍອາຫານຟຣີ ແລະ ອາຫານລາຄາຜ່ອນໃນໂຮງຮຽນຂອງຂ້ອຍກັບທາງ [name of program specific to your school].

ຖ້າທ່ານໝາຍເອົາວ່າແມ່ນ ຕໍ່ກັບຫ້ອງໃດໜຶ່ງ ຫຼື ທັງໝົດທຸກຫ້ອງຂ້າງເທິງ, ໃຫ້ຕື່ມແບບຟອມລຸ່ມນີ້ເພື່ອຮັບປະກັນໃຫ້ຂໍ້ມູນຂອງທ່ານໄດ້ຖືກແລກປ່ຽນສຳລັບເດັກນ້ອຍທີ່ມີຊື່ລຸ່ມນີ້. ຂໍ້ມູນຂອງທ່ານຈະຖືກແລກປ່ຽນພຽງແຕ່ກັບບັນດາໂຄງການທີ່ທ່ານໝາຍເອົາເທົ່ານັ້ນ.

ຊື່ຂອງເດັກ: _____ ໂຮງຮຽນ: _____

ຊື່ຂອງເດັກ: _____ ໂຮງຮຽນ: _____

ຊື່ຂອງເດັກ: _____ ໂຮງຮຽນ: _____

ຊື່ຂອງເດັກ: _____ ໂຮງຮຽນ: _____

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ_____ ວັນທີ: _____

ຊື່ເປັນຕົວພິມ:_____

ທີ່ຢູ່:_____

_____

ສຳລັບຂໍ້ມູນເພີ່ມເຕີມ, ທ່ານອາດຈະໂທຫາ [name] ທີ່ເບີ [phone] ຫຼື ອີເມວຫາ [e-mail address].

ໃຫ້ສົ່ງຄືນແບບຟອມນີ້ຫາ: [address] ພາຍໃນ [date].

ພວກເຮົາຕ້ອງໄດ້ກວດເບິ່ງຄຳຮ້ອງສະໝັກຂອງທ່ານ

ທ່ານາຕ້ອງໄດ້ສົ່ງຂໍ້ມູນທີ່ພວກເຮົາຕ້ອງການ, ຫຼື ຕິດຕໍ່ຫາ [name] ພາຍໃນ [date], ຫຼື ເດັກຂອງທ່ານຈະຢຸດເຊົາການໄດ້ຮັບ ອາຫານຟຣີ ຫຼື ອາຫານລາຄາຜ່ອນ.

ໂຮງຮຽນ: _____ ວັນທີ: _____

ສະບາຍດີ _____:

ພວກເຮົາກຳລັງກວດເບິ່ງຄຳຮ້ອງສະໝັກຂໍອາຫານຟຣີ ແລະ ອາຫານລາຄາຜ່ອນຢູ່ໂຮງຮຽນຂອງທ່ານ. ກົດລະບຽບຂອງ ລັດຖະບານກາງກຳນົດໃຫ້ພວກເຮົາເຮັດສິ່ງນີ້ເພື່ອຮັບປະກັນວ່າມີພຽງແຕ່ເດັກນ້ອຍທີ່ມີສິດໄດ້ຮັບເທົ່ານັ້ນທີ່ຈະໄດ້ຮັບອາຫານຟຣີ ຫຼື ອາຫານລາຄາຜ່ອນ. ທ່ານຕ້ອງໄດ້ສົ່ງຂໍ້ມູນເພື່ອພິສູດວ່າ [name(s) of child(ren)][is/are] ເປັນຜູ້ມີສິດໄດ້ຮັບ.

ຖ້າເປັນໄປໄດ້, ສົ່ງສຳເນົາ, ບໍ່ແມ່ນເອກະສານສະບັບຕົ້ນ, ຖ້າທ່ານສົ່ງສະບັບຕົ້ນມາ, ພວກມັນຈະຖືກສົ່ງຄືນຫາທ່ານພຽງແຕ່ຖ້າ ທ່ານຮ້ອງຂໍເອົາເທົ່ານັ້ນ.

1. ຖ້າທ່ານກຳລັງໄດ້ຮັບເງິນຊ່ວຍເຫຼືອຈາກ [State SNAP], [State TANF] ຫຼື [FDPIR] ໃນເວລາທີ່ທ່ານສະໝັກຂໍເອົາ ອາຫານຟຣີ ຫຼື ອາຫານລາຄາຜ່ອນ, ຫຼື ໃນທຸກເວລາຫຼັງຈາກນັ້ນ, ໃຫ້ສົ່ງໃຫ້ພວກເຮົາສຳເນົາຂອງໜຶ່ງໃນສິ່ງເຫຼົ່ານີ້:

- ໃບແຈ້ງການການຮັບຮອງ [State SNAP] ຫຼື [State TANF] ຫຼື [FDPIR] ທີ່ສະແດງວັນທີຂອງການຮັບຮອງ.
- ຈົດໝາຍຈາກຫ້ອງການ [State SNAP] ຫຼື [State TANF] ຫຼື [FDPIR] ທີ່ສະແດງວັນທີຂອງການຮັບຮອງ.
- ຢ່າສົ່ງບັດ EBT ຂອງທ່ານ.

2. ຖ້າທ່ານໄດ້ຮັບຈົດໝາຍນີ້ສຳລັບເດັກຂາດທີ່ຢູ່ອາໃສ, ເດັກອົບພະຍົບ ຫຼື ເດັກໜີອອກຈາກເຮືອນ, ກະລຸນາ ຕິດຕໍ່ຫາ [school, homeless liaison, or migrant coordinator] ສຳລັບຄວາມຊ່ວຍເຫຼືອ.

3. ຖ້າເດັກແມ່ນເດັກອຸປະຖຳ:
ສະໜອງເອກະສານເປັນລາຍລັກອັກສອນທີ່ພິສູດວ່າເດັກແມ່ນຢູ່ໃນຄວາມຮັບຜິດຊອບທາງກົດໝາຍຂອງໜ່ວຍງານ ຫຼື ສານ ຫຼື ສະໜອງຊື່ ແລະ ຂໍ້ມູນຕິດຕໍ່ສຳລັບບຸກຄົນຢູ່ໜ່ວຍງານ ຫຼື ສານຜູ້ທີ່ສາມາດພິສູດວ່າເດັກນັ້ນແມ່ນເດັກອຸປະຖຳ.

4. ຖ້າບໍ່ມີໃຜໃນຄົວເຮືອນຂອງທ່ານໄດ້ຮັບເງິນຊ່ວຍເຫຼືອ [State SNAP] ຫຼື [State TANF] ຫຼື [FDPIR]:
ສົ່ງໜ້າເຈ້ຍນີ້ພ້ອມກັບເອກະສານທີ່ສະແດງໃຫ້ເຫັນຈຳນວນເງິນທີ່ຄົວເຮືອນຂອງທ່ານໄດ້ຮັບຈາກແຕ່ລະແຫຼ່ງລາຍຮັບ. ເອກະສານທີ່ທ່ານສົ່ງຕ້ອງສະແດງ**ຊື່**ຂອງບຸກຄົນຜູ້ທີ່ໄດ້ຮັບລາຍຮັບດັ່ງກ່າວ, **ວັນທີ**ທີ່ໄດ້ຮັບ, ໄດ້ຮັບ**ຫຼາຍປານໃສດ**, ແລະ ໄດ້ຮັບ **ເລື້ອຍໆສ່ຳໃດ**. **ສົ່ງຂໍ້ມູນຫາ:** [address]

ເອກະສານທີ່ສາມາດຍອມຮັບໄດ້ປະກອບມີ:

ວຽກເຮັດ: ສົ້ນໃບເຊັກເງິນຄ່າຈ້າງ ຫຼື ຊອງເງິນຄ່າຈ້າງທີ່ສະແດງໃຫ້ເຫັນຈຳນວນເງິນທີ່ໄດ້ຮັບ ແລະ ໄດ້ຮັບເລື້ອຍໆສ່ຳໃດ; ຈົດໝາຍຈາກນາຍຈ້າງທີ່ລະບຸເງິນຄ່າຈ້າງລວມຍອດ ແລະ ທ່ານໄດ້ຮັບການຈ່າຍເງິນເລື້ອຍໆສ່ຳໃດ; ຫຼື, ຖ້າທ່ານເຮັດວຽກໃຫ້ ທ່ານເອງ, ເອກະສານທຸລະກິດ ຫຼື ການເຮັດຟາມ, ເຊັ່ນວ່າ ປື້ມສະໝຸດບັນຊີ ຫຼື ປື້ມເສຍພາສີ.

ເງິນປະກັນສັງຄົມ, ເງິນບຳນານ ຫຼື ເງິນກະສຽນວຽກ: ໜັງສືແຈ້ງເງິນປະໂຫຍດຈາກປະກັນສັງຄົມ, ເງິນບຳນານ, ໃບແຈ້ງເງິນປະໂຫຍດທີ່ໄດ້ຮັບ, ຫຼື ໃບແຈ້ງການມອບເງິນບຳນານ.

ເງິນຫວ່າງງານ, ເງິນຊ່ວຍເຫຼືອຄົນພິການ ຫຼື ເງິນຊົດເຊີຍຜູ້ອອກແຮງງານ: ແຈ້ງການການມີສິດໄດ້ຮັບຈາກຫ້ອງການຄວາມໝັ້ນຄົງດ້ານວຽກເຮັດຂອງລັດ, ສົ້ນໃບເຊັກ ຫຼື ຈົດໝາຍຈາກຫ້ອງການຊົດເຊີຍຜູ້ອອກແຮງງານ.

ເງິນສະຫວັດດີການ: ໜັງສືແຈ້ງເງິນຊ່ວຍເຫຼືອຈາກຫ້ອງການ [State TANF].

ເງິນຄ່າລ້ຽງລູກ ຫຼື ເງິນຄ່າລ້ຽງເມຍຫຼືຜົວ: ຄຳສັ່ງສານ, ສັນຍາ ຫຼື ສຳເນົາໃບເຊັກທີ່ໄດ້ຮັບ.

ລາຍຮັບອື່ນ (ເຊັ່ນວ່າ ລາຍຮັບຈາກຄ່າເຊົ່າ): ຂໍ້ມູນທີ່ສະແດງໃຫ້ເຫັນຈຳນວນລາຍຮັບທີ່ໄດ້ຮັບ, ໄດ້ຮັບເລື້ອຍໆສໍ່າໃດ, ແລະ ວັນທີທີ່ໄດ້ຮັບ.

ບໍ່ມີລາຍຮັບ: ໝາຍເຫດຫຍໍ້ໆທີ່ອະທິບາຍວ່າທ່ານສະໜອງອາຫານ, ເສື້ອຜ້າ ແລະ ທີ່ຢູ່ອາໃສສຳລັບຄົວເຮືອນຂອງທ່ານແນວໃດ, ແລະ ຄາດວ່າເມື່ອໃດທ່ານຈຶ່ງຈະມີລາຍຮັບ.

ໂຄງການພິເສດສຳລັບທີ່ພັກອາໃສຂອງທະຫານ: ຈົດໝາຍ ຫຼື ສັນຍາເຊົ່າທີ່ສະແດງໃຫ້ເຫັນວ່າທີ່ພັກອາໃສແມ່ນສ່ວນໜຶ່ງຂອງໂຄງການພິເສດສຳລັບທີ່ພັກອາໃສຂອງທະຫານ.

ກອບເວລາຂອງເອກະສານລາຍຮັບທີ່ຍອມຮັບໄດ້: ກະລຸນາ ສົ່ງໜັງກຖານສະແດງລາຍຮັບຂອງໜຶ່ງເດືອນ; ທ່ານສາມາດນຳໃຊ້ເດືອນກ່ອນການສະໝັກ, ເດືອນທີ່ທ່ານສະໝັກ, ຫຼື ເດືອນໃດໜຶ່ງຫຼັງຈາກນັ້ນ.

ຖ້າທ່ານມີຄຳຖາມ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ກະລຸນາ ໂທຫາ [name] ທີ່ເບີ [phone number]. ການໂທແມ່ນບໍ່ເສຍຄ່າ. [Toll free or reverse charge explanation]. ທ່ານອາດຈະອີເມວຫາພວກເຮົາທີ່ [e-mail address].

ດ້ວຍຄວາມຮັກແພດງ,

[signature]

ກົດໝາຍວ່າດ້ວຍອາຫານທ່ຽງຢູ່ໂຮງຮຽນ [Richard B. Russell National School Lunch Act] ກຳນົດຂໍ້ມູນໃນຄຳຮ້ອງສະໝັກນີ້. ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນ, ແຕ່ຖ້າທ່ານບໍ່ໃຫ້, ພວກເຮົາກໍ່ບໍ່ສາມາດອະນຸມັດເດັກຂອງທ່ານສຳລັບອາຫານຟຣີ ຫຼື ອາຫານລາຄາຜ່ອນ. ພວກເຮົາຈະນຳໃຊ້ຂໍ້ມູນຂອງທ່ານເພື່ອກຳນົດຕັດສິນວ່າເດັກຂອງທ່ານມີສິດໄດ້ຮັບອາຫານຟຣີ ຫຼື ລາຄາຜ່ອນຫຼືບໍ່, ແລະ ສຳລັບການຄຸ້ມຄອງບໍລິຫານ ແລະ ການບັງຄັບໃຊ້ໂຄງການອາຫານເຊົ້າ ແລະ ອາຫານທ່ຽງ.

ຄຳປະກາດກ່ຽວກັບການບໍ່ເລືອກປະຕິບັດ: ສິ່ງນີ້ອະທິບາຍສິ່ງທີ່ຕ້ອງເຮັດຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິບັດຕໍ່ຢ່າງບໍ່ຍຸຕິທຳ. "ອີງຕາມກົດໝາຍຂອງລັດຖະບານກາງ ແລະ ນະໂຍບາຍຂອງກະຊວງກະສິກຳແຫ່ງສະຫະລັດ, ສະຖາບັນນີ້ຖືກຫ້າມບໍ່ໃຫ້ເຮັດການເລືອກປະຕິບັດໃດໆບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ອາຍຸ ຫຼື ຄວາມພິການ. ເພື່ອຍື່ນຄຳຮ້ອງຮຽນເລື່ອງການຈຳແນກ, ໃຫ້ຂຽນຫາ USDA, Director, Office of Adjudication, 1400 Independence Avenue, SW, Washington, D.C. 20250-9410 ຫຼື ໂທຫາເບີໂທຟຣີ (866) 632-9992 (ສຽງ). ບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ ຫຼື ປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການ Federal Relay Service ທີ່ເບີ (800) 877-8339; ຫຼື (800) 845-6136 (ພາສາສະເປນ). USDA ແມ່ນນາຍจ้าง ແລະ ຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ."

ພວກເຮົາໄດ້ກວດເບິ່ງຄຳຮ້ອງສະໝັກຂອງທ່ານແລ້ວ

ໂຮງຮຽນ: _____ ວັນທີ: _____

ສະບາຍດີ _____:

ພວກເຮົາໄດ້ກວດເບິ່ງຂໍ້ມູນທີ່ທ່ານໄດ້ສົ່ງໃຫ້ພວກເຮົາເພື່ອພິສູດວ່າ [name(s) of child(ren)] ເປັນຜູ້ມີສິດໄດ້ຮັບອາຫານຟຣີ ຫຼື ອາຫານລາຄາຜ່ອນ ແລະ ໄດ້ຕັດສິນວ່າ:

- ❑ ການມີສິດໄດ້ຮັບອາຫານຂອງເດັກທ່ານບໍ່ປ່ຽນແປງ.
- ❑ ເລີ່ມແຕ່ວັນທີ [date], ການມີສິດຂອງເດັກທ່ານສຳລັບອາຫານຈະຖືກປ່ຽນ**ຈາກອາຫານລາຄາຜ່ອນເປັນອາຫານຟຣີ** ເພາະວ່າລາຍຮັບຂອງທ່ານແມ່ນຢູ່ພາຍໃນຂອບເຂດກຳນົດດ້ານການມີສິດໄດ້ຮັບອາຫານຟຣີ. ເດັກຂອງທ່ານຈະໄດ້ຮັບອາຫານໂດຍບໍ່ເສຍຄ່າໃດໆ.
- ❑ ເລີ່ມແຕ່ວັນທີ [date], ການມີສິດໄດ້ຮັບອາຫານຂອງເດັກທ່ານຈະຖືກປ່ຽນ**ຈາກອາຫານຟຣີເປັນອາຫານລາຄາຜ່ອນ** ເພາະວ່າລາຍຮັບຂອງທ່ານລົ້ນຂອບເຂດກຳນົດ. ອາຫານລາຄາຜ່ອນແມ່ນ [$] ສຳລັບອາຫານທ່ຽງ ແລະ [$] ສຳລັບອາຫານເຊົ້າ.
- ❑ ເລີ່ມແຕ່ວັນທີ [date], **ເດັກຂອງທ່ານແມ່ນບໍ່ມີສິດໄດ້ຮັບ**ອາຫານຟຣີ ຫຼື ອາຫານລາຄາຜ່ອນອີກຕໍ່ໄປ ເນື່ອງຈາກເຫດຜົນຕໍ່ໄປນີ້:
  - ___ ບັນທຶກສະແດງໃຫ້ເຫັນວ່າບໍ່ມີໃຜໃນຄົວເຮືອນຂອງທ່ານໄດ້ຮັບເງິນຊ່ວຍເຫຼືອ [State SNAP] ຫຼື [State TANF].
  - ___ ບັນທຶກສະແດງໃຫ້ເຫັນວ່າເດັກນັ້ນບໍ່ແມ່ນເດັກຂາດທີ່ຢູ່ອາໃສ, ເດັກໜີອອກຈາກເຮືອນ ຫຼື ເດັກອົບພະຍົບ.
  - ___ ລາຍຮັບຂອງທ່ານກາຍຂອບເຂດກຳນົດສຳລັບອາຫານຟຣີ ຫຼື ອາຫານລາຄາຜ່ອນ.
  - ___ ທ່ານບໍ່ສົ່ງ: _____
  - ___ ທ່ານບໍ່ຕອບຄືນຕໍ່ກັບຄຳຮ້ອງຂໍຂອງພວກເຮົາ.

ອາຫານມີລາຄາ [$] ສຳລັບອາຫານທ່ຽງ ແລະ [$] ສຳລັບອາຫານເຊົ້າ. ຖ້າລາຍຮັບຄົວເຮືອນຂອງທ່ານຫຼຸດລົງ ຫຼື ຂະໜາດຄົວເຮືອນຂອງທ່ານເພີ່ມຂຶ້ນ, ທ່ານອາດຈະສະໝັກຄືນໃໝ່ອີກກໍ່ໄດ້. ຖ້າໃນເມື່ອກ່ອນທ່ານຖືກປະຕິເສດການຊ່ວຍເຫຼືອ ເພາະວ່າບໍ່ມີໃຜໃນຄົວເຮືອນໄດ້ຮັບເງິນຊ່ວຍເຫຼືອ [State SNAP], [State TANF] ຫຼື [FDPIR], ທ່ານອາດຈະສະໝັກໃໝ່ອີກກໍ່ໄດ້ ອີງໃສ່ການມີສິດໄດ້ຮັບດ້ານລາຍຮັບ. ຖ້າທ່ານບໍ່ສະໜອງຫຼັກຖານສະແດງການມີສິດໄດ້ຮັບໃນປະຈຸບັນ, ທ່ານຈະຖືກຮ້ອງຂໍໃຫ້ເຮັດສິ່ງນັ້ນຖ້າທ່ານສະໝັກໃໝ່ອີກ.

ຖ້າທ່ານບໍ່ເຫັນດີນຳການຕັດສິນນີ້, ທ່ານອາດຈະປຶກສາມັນກັບ [name] ທີ່ເບີ [phone]. ນອກນັ້ນ ທ່ານຍັງມີສິດຮ້ອງຂໍການໄຕ່ສວນຍຸຕິທຳ. ຖ້າທ່ານຮ້ອງຂໍການໄຕ່ສວນພາຍໃນ [date], ເດັກຂອງທ່ານຈະສືບຕໍ່ໄດ້ຮັບອາຫານຟຣີ ຫຼື ອາຫານລາຄາຜ່ອນໄປຈົນກວ່າຈະມີການຕັດສິນຂອງເຈົ້າໜ້າທີ່ໄຕ່ສວນ. ທ່ານອາດຈະຮ້ອງຂໍໃຫ້ມີການໄຕ່ສວນໂດຍການໂທຫາ ຫຼື ຂຽນຫາ: [name], [address], [phone number], or [e-mail].

ດ້ວຍຄວາມຮັກແພງ,

[signature]

ຄຳປະກາດກ່ຽວກັບການບໍ່ເລືອກປະຕິບັດ: ສິ່ງນີ້ອະທິບາຍສິ່ງທີ່ຕ້ອງເຮັດຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິບັດຕໍ່ຢ່າງບໍ່ຍຸຕິທຳ. "ອີງຕາມກົດໝາຍຂອງລັດຖະບານກາງ ແລະ ນະ�โยบายຂອງກະຊວງກະສິກຳແຫ່ງສະຫະລັດ, ສະຖາບັນນີ້ຖືກຫ້າມບໍ່ໃຫ້ເຮັດການເລືອກປະຕິບັດໃດໆບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ອາຍຸ ຫຼື ຄວາມພິການ. ເພື່ອຍື່ນຄຳຮ້ອງຮຽນເລື່ອງການຈຳແນກ, ໃຫ້ຂຽນຫາ USDA, Director, Office of Adjudication, 1400 Independence Avenue, SW, Washington, D.C. 20250-9410 ຫຼື ໂທຫາເບີໂທຟຣີ (866) 632-9992 (ສຽງ). ບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ ຫຼື ປາກກົກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການ Federal Relay Service ທີ່ເບີ (800) 877-8339; ຫຼື (800) 845-6136 (ພາສາສະເປນ). USDA ແມ່ນນາຍจ้าง ແລະ ຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ."

ແຈ້ງການເຖິງຄົວເຮືອນເລື່ອງການອະນຸມັດ/ການປະຕິເສດການຊ່ວຍເຫຼືອ

ສະບາຍດີພໍ່ແມ່/ຜູ້ປົກຄອງ:

ທ່ານໄດ້ສະໝັກຂໍເອົາອາຫານຟຣີ ຫຼື ອາຫານລາຄາຜ່ອນສຳລັບເດັກຕໍ່ໄປນີ້;

_____ _____
_____ _____
_____ _____

ຄຳຮ້ອງສະໝັກຂອງທ່າແມ່ນ:

- ❑ ໄດ້ຮັບອະນຸມັດສຳລັບອາຫານຟຣີ
- ❑ ໄດ້ຮັບອະນຸມັດສຳລັບອາຫານລາຄາຜ່ອນໃນລາຄາ $ _____ ສຳລັບອາຫານທ່ຽງ, $ _____ ສຳລັບອາຫານເຊົ້າ, ແລະ $ _____ ສຳລັບອາຫານຫວ່າງ
- ❑ ຖືກປະຕິເສດເນື່ອງດ້ວຍເຫດຜົນຕໍ່ໄປນີ້:
  - ❑ ລາຍຮັບສູງເກີນຈຳນວນທີ່ອະນຸຍາດໃຫ້
  - ❑ ຄຳຮ້ອງສະໝັກຄົບຖ້ວນ ເພາະວ່າ _____
  - ❑ ອື່ນ _____

ຖ້າທ່ານບໍ່ເຫັນດີນຳການຕັດສິນດັ່ງກ່າວ, ທ່ານອາດຈະປຶກສາຫາລືນັນກັບ [school official's name] ທີ່ເບີ [phone number] ຫຼື [e-mail address]. ຖ້າທ່ານຕ້ອງການທົບທວນຄືນຄຳຕັດສິນເພີ່ມຕື່ມອີກ, ທ່ານມີສິດຮ້ອງຂໍການໄຕ່ສວນຍຸຕິທຳ. ສິ່ງນີ້ສາມາດເຮັດໄດ້ໂດຍການໂທຫາ ຫຼື ຂຽນຫາເຈົ້າໜ້າທີ່ຕໍ່ໄປນີ້:

ຊື່: _____

ທີ່ຢູ່: _____

ເບີໂທລະສັບ: _____ ອີເມວ _____

ດ້ວຍຄວາມຮັກແພງ,

[signature]

_____
ຊື່ ຕຳແໜ່ງ ວັນທີ

ຄຳປະກາດກ່ຽວກັບການເລືອກປະຕິບັດ: ສິ່ງນີ້ອະທິບາຍສິ່ງທີ່ຕ້ອງເຮັດຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິບັດຕໍ່ຢ່າງບໍ່ຍຸຕິທຳ. "ອີງຕາມກົດໝາຍຂອງລັດຖະບານກາງ ແລະ ນະ�โยบายຂອງກະຊວງກະສິກຳແຫ່ງສະຫະລັດ, ສະຖາບັນນີ້ຖືກຫ້າມບໍ່ໃຫ້ເຮັດການເລືອກປະຕິບັດໃດໆບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ອາຍຸ ຫຼື ຄວາມພິການ. ເພື່ອຍື່ນຄຳຮ້ອງຮຽນເລື່ອງການຈຳແນກ, ໃຫ້ຂຽນຫາ USDA, Director, Office of Adjudication, 1400 Independence Avenue, SW, Washington, D.C. 20250-9410 ຫຼື ໂທຫາເບີໂທຟຣີ (866) 632-9992 (ສຽງ). ບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ ຫຼື ປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການ Federal Relay Service ທີ່ເບີ (800) 877-8339; ຫຼື (800) 845-6136 (ພາສາສະເປນ). USDA ແມ່ນນາຍจ้าง ແລະ ຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ."

ແຈ້ງການເລື່ອງການຮັບຮອງໂດຍກົງ

ສະບາຍດີພໍ່ແມ່/ຜູ້ປົກຄອງ:

ພວກເຮົາຕ້ອງການແຈ້ງໃຫ້ທ່ານຊາບว่าເດັກນ້ອຍທີ່ມີຊື່ລຸ່ມນີ້ຈະໄດ້ຮັບອາຫານທ່ຽງ, ອາຫານເຊົ້າ ແລະ ອາຫານຫວ່າງຟຣີຢູ່ໂຮງຮຽນ ເພາະວ່າພວກເຂົາໄດ້ຮັບ [State SNAP] ຫຼື [State TANF].

ຊື່ຂອງເດັກ	ຊື່ໂຮງຮຽນ

ຖ້າມີເດັກຄົນອື່ນໃນຄົວເຮືອນຂອງທ່ານຜູ້ທີ່ບໍ່ມີຊື່ຢູ່ຂ້າງເທິງ, ***ພວກເຂົາກໍ່ມີຄຸນສົມບັດໄດ້ຮັບອາຫານຟຣີເຊັ່ນກັນ.***

ກະລຸນາ ຕິດຕໍ່ຫາໂຮງຮຽນທີ່ເດັກຂອງທ່ານຮຽນຢູ່ ຖ້າເກີດມີສະພາບການຕໍ່ໄປນີ້:

- ຖ້າມີເດັກຄົນອື່ນໃນຄົວເຮືອນຂອງທ່ານຜູ້ທີ່ບໍ່ມີຊື່ຢູ່ຂ້າງເທິງ ແລະ ທ່ານຕ້ອງການໃຫ້ພວກເຮົາໄດ້ຮັບອາຫານຟຣີຢູ່ໂຮງຮຽນ
- ທ່ານບໍ່ຕ້ອງການເດັກຂອງທ່ານໄດ້ຮັບອາຫານຟຣີ
- ທ່ານມີຄຳຖາມເພີ່ມເຕີມ

[name]

[phone number]

[e-mail address]

ດ້ວຍຄວາມຮັກແພງ,

[signature]

ຄຳປະກາດກ່ຽວກັບການບໍ່ເລືອກປະຕິບັດ: ສິ່ງນີ້ອະທິບາຍສິ່ງທີ່ຕ້ອງເຮັດຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິບັດຕໍ່ຢ່າງບໍ່ຍຸຕິທຳ. "ອີງຕາມກົດໝາຍຂອງລັດຖະບານກາງ ແລະ ນະ�โยบายຂອງກະຊວງກະສິກຳແຫ່ງສະຫະລັດ, ສະຖາບັນນີ້ຖືກຫ້າມບໍ່ໃຫ້ເຮັດການຈຳແນກໃດໆບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ອາຍຸ ຫຼື ຄວາມພິການ. ເພື່ອຍື່ນຄຳຮ້ອງຮຽນເລື່ອງການຈຳແນກ, ໃຫ້ຂຽນຫາ USDA, Director, Office of Adjudication, 1400 Independence Avenue, SW, Washington, D.C. 20250-9410 ຫຼື ໂທຫາເບີໂທຟຣີ (866) 632-9992 (ສຽງ). ບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ ຫຼື ປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການ Federal Relay Service ທີ່ເບີ (800) 877-8339; ຫຼື (800) 845-6136 (ພາສາສະເປນ). USDA ແມ່ນນາຍจ้าง ແລະ ຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ."